ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 192/ລບ
ນະຄອນຫຼວງວຽງຈັນ, ວັນທີ 7 ເມສາ 2023

# ດຳລັດ
# ວ່າດ້ວຍ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການວັດແທກ ສະບັບເລກທີ 36/ສພຊ, ລົງວັນທີ 13 ທັນວາ 2013;
- ອີງຕາມ ໜັງສືສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0683/ອຄ, ລົງວັນທີ 02 ມິຖຸນາ 2022.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ເພື່ອເປັນບ່ອນອີງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການປັບໃໝ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ການເຄື່ອນໄຫວກ່ຽວກັບການວັດແທກຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ຮັບປະກັນຄວາມ ໂປ່ງໃສ ແລະ ຍຸຕິທຳ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ຊົມໃຊ້ ແລະ ຜູ້ປະກອບການ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບການວັດແທກ.

ການນຳໃຊ້ມາດຕະການອື່ນ ແມ່ນ ການນຳໃຊ້ມາດຕະການເພີ່ມ ຈາກມາດຕະການປັບໃໝ ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບການວັດແທກ ເປັນຕົ້ນ ການໂຈະ, ຖອນ ຫຼື

ຍົກເລີກໃບຢັ້ງຢືນ, ຢຸດ, ຮຽກຄືນ, ຍຶດ ຫຼື ທຳລາຍ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ແລະ ສິນຄ້າຫຸ້ມຫໍ່.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ແມ່ແບບວັດແທກ** ໝາຍເຖິງ ແມ່ແບບມາດຕະຖານ ທີ່ມີຄ່າຄວາມຊັດເຈນສູງໃນການ ກວດທຽບ, ສອບທຽບ ແລະ ກວດຄືນ ເຄື່ອງມື ແລະ ອຸປະກອນວັດແທກທົ່ວໄປ;

2. **ເຄື່ອງມື ແລະ ອຸປະກອນວັດແທກ** ໝາຍເຖິງ ເຄື່ອງມື ແລະ ອຸປະກອນທີ່ສ້າງຂຶ້ນ ເພື່ອນຳໃຊ້ເຂົ້າໃນການກວດສອບ, ຢັ້ງຢືນ ຄວາມຖືກຕ້ອງ ໃນຂັ້ນຕອນການຜະລິດ, ບໍລິການ, ແລກປ່ຽນ ແລະ ຊື້ຂາຍ;

3. **ອຸປະກອນລ໋ອກ** ໝາຍເຖິງ ວັດຖຸ ຫຼື ສິ່ງຂອງ ທີ່ເຈົ້າໜ້າທີ່ຕິດໃສ່ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ເພື່ອປ້ອງກັນການ ດັດແກ້ ຫຼື ດັດແປງ;

4. **ການດັດແປງ** ໝາຍເຖິງ ການດັດແກ້ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ສອດຄ່ອງຕາມມາດຕະຖານເຕັກນິກ ທີ່ກຳນົດໄວ້.

**ມາດຕາ 4 ຫຼັກການກ່ຽວກັບການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ຢູ່ ສປປ ລາວ.

## ໝວດທີ 2
## ອັດຕາການປັບໃໝ ແລະ ນຳໃຊ້ມາດຕະການອື່ນ
## ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ

**ມາດຕາ 6 ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ**

ພຶດຕິກຳ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ມີ ດັ່ງນີ້:

1. ການຜະລິດ ແລະ ການຈຳໜ່າຍ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ໄດ້ກວດທຽບ, ສອບທຽບ ແລະ ກວດຄືນ ຫຼື ບໍ່ໄດ້ຂຶ້ນທະບຽນ;

2. ການນຳເຂົ້າ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ໄດ້ຮັບອະນຸຍາດ;

3. ການນຳໃຊ້ໃບຢັ້ງຢືນທີ່ໝົດອາຍຸ ຫຼື ຖືກຍົກເລີກ ແລະ ນຳໃຊ້ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ໝົດອາຍຸການຢັ້ງຢືນ;

4. ການລະເມີດລະບຽບກ່ຽວກັບການ ກວດທຽບ, ສອບທຽບ ແລະ ກວດຄືນ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ;

5. ການຖອນອຸປະກອນລ໋ອກ, ລອກ ຫຼື ແກະສະຕິກເກີ ແລະ ກາໝາຍອອກຈາກ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ໂດຍບໍ່ໄດ້ຮັບການອະນຸຍາດ;

6. ຕິດກາໝາຍຢັ້ງຢືນ ຫຼື ກາໝາຍການກວດຄືນ ທີ່ປອມແປງ ຫຼື ຜິດກົດໝາຍ ແລະ ລະບຽບການ;

7. ການລະເມີດເງື່ອນໄຂ ກ່ຽວກັບສິນຄ້າຫຸ້ມຫໍ່;

8. ສະແດງປະລິມານທີ່ຄິດໄລ່ບໍ່ຖືກຕ້ອງ ເພື່ອເຮັດໃຫ້ຜູ້ອື່ນເຂົ້າໃຈຜິດ ຫຼື ຫຼອກລວງຜູ້ອື່ນ ໂດຍເຈດຕະນາ;

9. ການດັດແປງແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ຄົບອົງປະກອບການກະທຳຜິດທາງອາຍາ.

**ມາດຕາ 7 ອັດຕາການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພຶດຕິກຳ ເປັນການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ຕາມທີ່ກຳນົດໄວ້ໃນມາດຕາ 6 ຂອງດຳລັດສະບັບນີ້ ໂດຍເຈດຕະນາ ຫຼື ບໍ່ເຈດຕະນາ ເປັນຄັ້ງທີສອງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝສອງເທົ່າ ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 8 ພື້ນຖານການຄິດໄລ່ຄວາມເສຍຫາຍ**

ພື້ນຖານການຄິດໄລ່ຄວາມເສຍຫາຍ ໃຫ້ປະຕິບັດຕາມກໍລະນີ ດັ່ງນີ້:

1. ຄວາມເສຍຫາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂໍ້ 1 ຫາ ຂໍ້ 8 ຂອງດຳລັດສະບັບນີ້ ໃຫ້ອີງໃສ່ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານການວັດແທກ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ກຳນົດໄວ້ໃນແຕ່ລະໄລຍະ ແລະ ມູນຄ່າສິ້ນເປືອງຂອງຂະບວນການຢັ້ງຢືນ ເປັນພື້ນຖານການຄິດໄລ່;

2. ຄວາມເສຍຫາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂໍ້ 9 ຂອງດຳລັດສະບັບນີ້ ໃຫ້ອີງໃສ່ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານການວັດແທກ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ກຳນົດໄວ້ໃນແຕ່ລະໄລຍະ, ມູນຄ່າສິ້ນເປືອງຂອງຂະບວນການຢັ້ງຢືນ ແລະ ມູນຄ່າທີ່ກວດພົບເປັນພື້ນຖານການຄິດໄລ່.

**ມາດຕາ 9 ມາດຕະການອື່ນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພຶດຕິກຳ ເປັນການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງດຳລັດສະບັບນີ້ ນອກຈາກຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງດຳລັດສະບັບນີ້ ຍັງຈະຖືກ ໂຈະ, ຖອນ ຫຼື ຍົກເລີກ ໃບຢັ້ງຢືນ; ຢຸດ, ຮຽກຄືນ, ຍຶດ ຫຼື ທຳລາຍ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ແລະ ສິນຄ້າຫຸ້ມຫໍ່ ຕາມແຕ່ລະກໍລະນີ.

## ໝວດທີ 3
## ການຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ

**ມາດຕາ 10 ການຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ໂດຍປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ປະກອບດ້ວຍ:

1. ຂັ້ນສູນກາງ ແມ່ນ ກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງແມ່ນ ກົມມາດຕະຖານ ແລະ ວັດແທກ;

2. ຂັ້ນທ້ອງຖິ່ນ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ໃນການປັບໃໝ ແລະ ການນຳໃຊ້ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ຕາມການແບ່ງຂັ້ນຄຸ້ມຄອງແຕ່ລະໄລຍະ ມີກໍລະນີ ດັ່ງນີ້:

1. ການຜະລິດ ແລະ ການຈຳໜ່າຍ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ໄດ້ກວດທຽບ, ສອບທຽບ ແລະ ກວດຄືນ ຫຼື ບໍ່ໄດ້ຂຶ້ນທະບຽນ;

2. ການນຳເຂົ້າ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ໄດ້ຮັບອະນຸຍາດ;

3. ການນຳໃຊ້ໃບຢັ້ງຢືນທີ່ໝົດອາຍຸ ຫຼື ຖືກຍົກເລີກ ແລະ ນຳໃຊ້ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ໝົດອາຍຸການຢັ້ງຢືນ;

4. ການລະເມີດລະບຽບກ່ຽວກັບການກວດທຽບ, ສອບທຽບ ແລະ ກວດຄືນ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ;

5. ການຖອນອຸປະກອນລ໋ອກ, ລອກ ຫຼື ແກະສະຕິກເກີ ແລະ ກາໝາຍອອກຈາກ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ໂດຍບໍ່ໄດ້ຮັບການອະນຸຍາດ;

6. ຕິດກາໝາຍຢັ້ງຢືນ ຫຼື ກາໝາຍການກວດຄືນ ທີ່ປອມແປງ ຫຼື ຜິດກົດໝາຍ ແລະ ລະບຽບການ;

7. ການລະເມີດເງື່ອນໄຂ ກ່ຽວກັບສິນຄ້າຫຸ້ມຫໍ່;

8. ສະແດງປະລິມານທີ່ຄິດໄລ່ບໍ່ຖືກຕ້ອງ ເພື່ອເຮັດໃຫ້ຜູ້ອື່ນເຂົ້າໃຈຜິດ ຫຼື ຫຼອກລວງຜູ້ອື່ນ ໂດຍເຈດຕະນາ;

9. ການດັດແປງແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ຄົບອົງປະກອບການກະທຳຜິດທາງອາຍາ.

**ມາດຕາ 12 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ໃນການປັບໃໝ ແລະ ການນຳໃຊ້ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ຕາມການແບ່ງຂັ້ນຄຸ້ມຄອງແຕ່ລະໄລຍະ ມີກໍລະນີ ດັ່ງນີ້:

1. ການນຳໃຊ້ໃບຢັ້ງຢືນທີ່ໝົດອາຍຸ ຫຼື ຖືກຍົກເລີກ ແລະ ນຳໃຊ້ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ໝົດອາຍຸການຢັ້ງຢືນ;

2. ການລະເມີດລະບຽບກ່ຽວກັບການກວດທຽບ, ສອບທຽບ ແລະ ກວດຄືນ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ;

3. ການຖອນອຸປະກອນລ໋ອກ, ລອກ ຫຼື ແກະສະຕິກເກີ ແລະ ກາໝາຍອອກຈາກ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ໂດຍບໍ່ໄດ້ຮັບການອະນຸຍາດ;

4. ຕິດກາໝາຍຢັ້ງຢືນ ຫຼື ກາໝາຍການກວດຄືນ ທີ່ປອມແປງ ຫຼື ຜິດກົດໝາຍ ແລະ ລະບຽບການ;

5. ການລະເມີດເງື່ອນໄຂ ກ່ຽວກັບສິນຄ້າຫຸ້ມຫໍ່;

6. ສະແດງປະລິມານທີ່ຄິດໄລ່ບໍ່ຖືກຕ້ອງ ເພື່ອເຮັດໃຫ້ຜູ້ອື່ນເຂົ້າໃຈຜິດ ຫຼື ຫຼອກລວງຜູ້ອື່ນ ໂດຍເຈດຕະນາ;

7. ການດັດແປງແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ຄົບອົງປະກອບການກະທຳຜິດທາງອາຍາ.

**ມາດຕາ 13 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ໃນການປັບໃໝ ແລະ ການນຳໃຊ້ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ຕາມການແບ່ງຂັ້ນຄຸ້ມຄອງແຕ່ລະໄລຍະ ມີກໍລະນີ ດັ່ງນີ້:

1. ການນຳໃຊ້ໃບຢັ້ງຢືນທີ່ໝົດອາຍຸ ຫຼື ຖືກຍົກເລີກ ແລະ ນຳໃຊ້ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ໝົດອາຍຸການຢັ້ງຢືນ;

2. ການລະເມີດລະບຽບກ່ຽວກັບການກວດທຽບ, ສອບທຽບ ແລະ ກວດຄືນ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ;

3. ການຖອນອຸປະກອນລ໋ອກ, ລອກ ຫຼື ແກະສະຕິກເກີ ແລະ ກາໝາຍອອກຈາກ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ໂດຍບໍ່ໄດ້ຮັບການອະນຸຍາດ;

4. ຕິດກາໝາຍຢັ້ງຢືນ ຫຼື ກາໝາຍການກວດຄືນ ທີ່ປອມແປງ ຫຼື ຜິດກົດໝາຍ ແລະ ລະບຽບການ;

5. ສະແດງປະລິມານທີ່ຄິດໄລ່ບໍ່ຖືກຕ້ອງ ເພື່ອເຮັດໃຫ້ຜູ້ອື່ນເຂົ້າໃຈຜິດ ຫຼື ຫຼອກລວງຜູ້ອື່ນ ໂດຍເຈດຕະນາ;

6. ການດັດແປງແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ຄົບອົງປະກອບການກະທຳຜິດທາງອາຍາ.

**ມາດຕາ 14 ຄວາມຮັບຜິດຊອບຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບ ໃຫ້ການຮ່ວມມື, ອຳນວຍຄວາມສະດວກ, ຕິດຕາມ ກວດກາ, ສະໜອງຂໍ້ມູນ, ແຈ້ງໃຫ້ຊາບ ແລະ ປະສານສົມທົບກັບ ຂະແໜງການອຸດສາຫະກຳ ແລະ ການຄ້າ ກໍລະນີພົບເຫັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ ຕາມພາລະບົດບາດຂອງຕົນ.

## ໝວດທີ 4

## ການຄຸ້ມຄອງ ແລະ ນຳໃຊ້ ແມ່ແບບວັດແທກ, ເຄື່ອງມື, ອຸປະກອນວັດແທກ, ສິນຄ້າຫຸ້ມຫໍ່ ທີ່ຖືກ ຮຽກຄືນ, ຍຶດ ແລະ ເງິນຈາກການປັບໃໝ

**ມາດຕາ 15 ການຄຸ້ມຄອງ ແລະ ນຳໃຊ້ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ແລະ ສິນຄ້າຫຸ້ມຫໍ່ ທີ່ຖືກ ຮຽກຄືນ ແລະ ຍຶດ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ແລະ ສິນຄ້າຫຸ້ມຫໍ່ ທີ່ຖືກ ຮຽກຄືນ ແລະ ຍຶດ ຈາກການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການວັດແທກ.

ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ແລະ ສິນຄ້າຫຸ້ມຫໍ່ ທີ່ໄດ້ມາດຕະຖານເຕັກນິກຕ້ອງເກັບມ້ຽນ ແລະ ປົກປັກຮັກສາໃນສະຖານທີ່ ແລະ ເງື່ອນໄຂທີ່ເໝາະສົມ ເພື່ອນຳໃຊ້ໃຫ້ເກີດຜົນປະໂຫຍດ

ສູງສຸດ ເປັນຕົ້ນ ນໍາໄປຊ່ວຍເຫຼືອສັງຄົມ, ນໍາໃຊ້ໃນວຽກງານລັດຖະການ ຫຼື ປະມູນຂາຍ ຕາມກົດໝາຍ ແລະ ລະບຽບການ.

ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນວັດແທກ ທີ່ບໍ່ໄດ້ມາດຕະຖານເຕັກນິກ ຕ້ອງນໍາໄປທໍາລາຍ.

**ມາດຕາ 16 ການຄຸ້ມຄອງ ແລະ ການນໍາໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ຕາມດໍາລັດສະບັບນີ້ 60% (ຫົກສິບສ່ວນຮ້ອຍ) ມອບເຂົ້າງົບປະມານແຫ່ງລັດ ສ່ວນເງິນທີ່ເຫຼືອ 40% (ສີ່ສິບສ່ວນຮ້ອຍ) ໃຫ້ຈົດເປັນລາຍຮັບ-ລາຍຈ່າຍວິຊາການ ໂດຍໃຫ້ຂະແໜງການອຸດສາຫະກໍາ ແລະ ການຄ້າ ເປີດບັນຊີຄຸ້ມຄອງຜ່ານລະບົບຄັງເງິນແຫ່ງຊາດ ແລະ ຂຶ້ນແຜນການນໍາໃຊ້ງົບປະມານ ເພື່ອນໍາໃຊ້ບໍລິຫານວຽກງານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 17 ຂອງດໍາລັດສະບັບນີ້. ສໍາລັບການ ຈັດຕັ້ງປະຕິບັດແຜນງົບປະມານປະຈໍາປີ ແມ່ນຜູ້ສັ່ງການ ຫຼື ຜູ້ຖືກມອບສິດ ເປັນຜູ້ອະນຸມັດແຕ່ລະຄັ້ງ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 17 ເປົ້າໝາຍການນໍາໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ຕ້ອງນໍາໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ປູກຈິດສໍານຶກ ໃຫ້ສັງຄົມເຫັນຄວາມສໍາຄັນກ່ຽວກັບການວັດແທກ;
2. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານການວັດແທກ;
3. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ;
4. ການເກັບມ້ຽນ, ການປົກປັກຮັກສາ, ຄ່າຝາກສາງ ແລະ ການທໍາລາຍ ແມ່ແບບວັດແທກ, ເຄື່ອງມື ແລະ ອຸປະກອນ ວັດແທກ ແລະ ສິນຄ້າຫຸ້ມຫໍ່ ທີ່ຍຶດມາໄດ້;
5. ການຈັດຊື້ວັດຖຸປະກອນ ແລະ ສິ່ງອໍານວຍຄວາມສະດວກ ໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່;
6. ວຽກງານອື່ນ ກ່ຽວກັບການວັດແທກ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການຈັດຕັ້ງປະຕິບັດດໍາລັດສະບັບນີ້.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ດໍາລັດສະບັບນີ້ມີຜົນສັກສິດນັບແຕ່ວັນທີ 09 ພຶດສະພາ 2023 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**